Australian Government

What's Next?

# ຄວາມຊ່ວຍເຫຼືອສໍາລັບພະນັກງານຜະລິດລົດຍົນ

*ເຮົາມີຄວາມຊ່ວຍເຫຼືອໄວ້ໃຫ້ສໍາລັບຊ່ວຍພະນັກງານທີ່ເຮັດວຽກດ້ານອຸສາຫະກໍາຜະລິດລົດໃນຊ່ວງຂ້າມຜ່ານໃນການຊອກຫາວຽກໃໝ່ເຮັດເມື່ອໂຮງງານຜະລິດລົດປິດລົງໃນອອສເຕຣເລັຍ.*

ໂຄງການລິເລີ່ມຄວາມຊໍານານແລະຝຶກອາຊີບ (Skills and Training Initiative) ແມ່ນຕັ້ງຂຶ້ນມາເພື່ອຊ່ວຍພະນັກງານຈາກ Holden ແລະ Toyota.

ໂຄງການລິເລີ່ມຄວາມຊໍານານແລະຝຶກອາຊີບນີ້ປະກອບສ່ວນເຂົ້າກັບບັນດາໂຄງການຕ່າງໆຂອງລັດຖະບານສໍາລັບພະນັກງານເຮັດວຽກເປັນສາຍແລະກິດຈະກໍາຕ່າງໆ ທີ່ທາງບໍລິສັດ Holden ແລະ Toyota ປະຕິບັດຢູ່ເພື່ອຊ່ວຍໃຫ້ພະນັກງານຂອງຕົນກຽມພ້ອມໃນການຫາວຽກ.

ໂດຍການຮ່ວມມືກັນ, ໂຄງການລິເລີ່ມຕ່າງໆເຫຼົ່ານີ້ຈະເຂົ້າໄປຊ່ວຍພະນັກງານທີ່ໄດ້ຮັບຜົນກະທົບ, ເຊິ່ງຫຼາຍໆຄົນກໍມີປະສົບການກວ້າງຂວາງແລະມີຄວາມຊໍານານສູງ, ເພື່ອຂ້າມຜ່ານໄປສູ່ວຽກໃໝ່, ເປີດໂອກາດເຮັດທຸລະກິດເອງ ຫຼື ອອກບໍານານ.

ໂຄງການລິເລີ່ມເຫຼົ່ານີ້ຈະຊ່ວຍພະນັກງານໃຫ້ກໍ່ສ້າງຄວາມຊໍານານທີ່ຕົນມີຢູ່ແລະຮຽນຮູ້ຄວາມຊໍານານອັນໃໝ່ເຊິ່ງສາມາດນໍາໄປໃຊ້ໄດ້ທີ່ຂະແໜງອື່ນ, ເຊັ່ນບໍລິການດ້ານສຸຂະພາບ,ການທ່ອງທ່ຽວ, ການສຶກສາ, ອາຫານແລະກະສິກໍາແລະອຸສາຫະກໍາທີ່ກ້າວໜ້າ.

ທັງ Holden ແລະ Toyota ໄດ້ປະກອບສ່ວນແຕ່ລະບໍລິສັດເປັນຈໍານວນເງິນ $15 ລ້ານຕໍ່ໂຄງການລິເລີ່ມຄວາມຊໍານານແລະຝຶກອາຊີບ.

## ພະນັກງານຈະໄດ້ຮັບຄວາມອູ້ມຊູຫຍັງແດ່?

ການລິເລີ່ມດັ່ງກ່າວນີ້ຈະໃຫ້ການອູ້ມຊູທີ່ເໝາະສົມກັບຄວາມຕ້ອງການ, ລວມມີ:

- ຮຽນຮູ້ເລື່ອງການເງິນ
- ບໍລິການດ້ານສຸຂະພາບແລະຄວາມຢູ່ດີກິນດີ
- ຂໍ້ມູນກ່ຽວກັບວຽກທີ່ຕະຫຼາດຕ້ອງການ
- ແນະນໍາເລື່ອງອາຊີບ, ຂ້າມຜ່ານແລະຝຶກງານ
- ປະເມີນແລະຮັບຮູ້ຄວາມຊໍານານ
- ຝຶກຝົນແລະຝຶກຄວາມຊໍານານທົ່ວໄປ (ເຊັ່ນຄວາມຊໍານານດ້ານປາກເວົ້າແລະສື່ສານ)
- ແນະນໍາການເລີ້ມເຮັດທຸລະກິດ.

## ພະນັກງານຈະໄດ້ຮັບບໍລິການນີ້ຕອນໃດ?

ພະນັກງານຈະໄດ້ຮັບບໍລິການນີ້ໃນລະຫວ່າງທີ່ຍັງເຮັດວຽກຢູ່ໃນປັດຈຸບັນ. ການບໍລິການຈະໄດ້ຖືກແຜ່ຜາຍອອກໄປຕາມຂັ້ນຕອນທີ່ໄດ້ປະສານກັນໄວ້ ແລະພະນັກງານຈະໄດ້ຖືກແຈ້ງໃຫ້ຊາບເມື່ອບໍລິການ ເປີດຮຽບຮ້ອຍແລ້ວ.

ບໍລິການບາງຢ່າງກໍຈະສືບຕໍ່ໄວ້ໃຫ້ພະນັກງານຫຼັງຈາກເຂົາເຈົ້າອອກຈາກວຽກແລ້ວເຊັ່ນກັນ.

ລັດຖະບານອອສເຕຣເລັຍໄດ້ປະສານງານກັບ Holden, Toyota ແລະ ລັດຖະບານຂອງ South Australia ແລະ Victoria ເພື່ອໃຫ້ການອູ້ມຊູແກ່ພະນັກງານຢ່າງບໍ່ຈໍາກັດ.

## ການອູ້ມຊູພະນັກງານ Holden ແລະ Toyota

Holden ແລະ Toyota ຈະໃຫ້ບໍລິການສ່ວນໃຫຍ່ແກ່ພະນັກງານຂອງຕົນ.

Toyota ໄດ້ກໍ່ຕັ້ງໂຄງການພັດທະນາແລະຮໍ່າຮຽນແບບເໝາະສົມທີ່ສຸມໃສ່ຄວາມຕ້ອງການຂອງພະນັກງານແຕ່ລະຄົນໂດຍສະເພາະ, ເຊິ່ງເອີ້ນວ່າ 'DRIVE' (Dedicated Ready Individual Vocational Energised). Holden ໄດ້ສ້າງສູນຂ້າມຜ່ານຂຶ້ນຫຼາຍຈຸດເພື່ອເປີດໂອກາດໃຫ້ພະນັກງານໄດ້ມາປຶກສາເລື່ອງວຽກຂອງຕົນໂດຍສະເພາະແລະທາງເລືອກໃນການຝຶກອາຊີບ.

ກະຣຸນາ ຕິດຕໍ່ຫາຫ້ອງການຊັບພະຍາກອນມະນຸດຖ້າຕ້ອງການລາຍລະອຽດເພີ່ມ.

## ການອຸ້ມຊູສໍາລັບພະນັກງານ Ford

Ford Australia ໄດ້ປະກາດວ່າຈະປິດພະແນກລິດຍົນ ແລະເຄື່ອງຈັກລົດຂອງຕົນກ່ອນ Holden ແລະ Toyota.

ປັດຈຸບັນ ພະນັກງານ Ford ແມ່ນໄດ້ຮັບການອຸ້ມຊູ ດ້ານຝຶກຄວາມຊໍານານໃໝ່ແລະເພີ່ມພູນຄວາມຊໍານານໂດຍຜ່ານໂຄງການຂ້າມຜ່ານຂອງ Ford. ລັດຖະບານອອສເຕຣເລັຍໄດ້ໃຫ້ເງິນອຸປະຖໍາ ເປັນຈໍານວນ $5 ລ້ານແກ່ Auto Skills Australia ເພື່ອອຸ້ມຊູລະຍະຂ້າມຜ່ານຂອງພະນັກງານຈາກວຽກໃນປັດຈຸບັນໄປສູ່ວຽກອື່ນທີ່ເໝາະສົມຫຼັງຈາກໂຮງງານປິດລົງແລ້ວ. ກະຣຸນາຕິດຕໍ່ຫາພະແນກຊັບພະຍາກອນມະນຸດຖ້າທ່ານຕ້ອງການລາຍລະອຽດເພີ່ມ.

ພະນັກງານທີ່ຖືກຖອນອອກຈາກໂຮງງານເຄືອຂ່າຍທີ່ Ford ສົ່ງເຄື່ອງໃຫ້ກໍສາມາດໃຊ້ບໍລິການຈາກ Ford Transition Project ເຊິ່ງດໍາເນີນໂດຍ Auto Skills Australia ນີ້ໄດ້ເຊັ່ນກັນ.

## ການອຸ້ມຊູສໍາລັບພະນັກງານເຮັດວຽກເປັນສາຍໃນລັດ South Australia

ພະນັກງານທີ່ມີສິດ ສາມາດເຂົ້າໃຊ້ໂຄງການອຸ້ມຊູລະຍະຂ້າມຜ່ານ ຂອງພະນັກງານຜະລິດລົດຍົນຂອງລັດຖະບານ South Australia ໄດ້. ທ່ານສາມາດເອົາຂໍ້ມູນໄດ້ຕື່ມທີ່:

- ອີເມລ - **workersintransition@sa.gov.au**
- ໂທ - **1800 774 010**
- ເຂົ້າເບິ່ງ - www.statedevelopment.sa.gov.au/industry/automotive/awtp

## ການອຸ້ມຊູພະນັກງານເຮັດວຽກສາຍໃນລັດ Victoria

ພະນັກງານທີ່ມີສິດສາມາດເຂົ້າໃຊ້ບໍລິການອຸ້ມຊູຕ່າງໆ ໂດຍຜ່ານສູນຊອກຫາງານແລະຝຶກຄວາມຊໍານານຂອງ ລັດຖະບານ Victoria. ບໍລິການລວມມີການໃຫ້ຄໍາແນະນໍາວິຊາຊີບແລະການຝຶກງານ; ແລະໃຊ້ບໍລິການເພີ່ມເຖິງການຝຶກອາຊີບທີ່ໄດ້ຮັບການຮັບຮູ້ ຜ່ານໂຄງການ Victorian Training Guarantee.

ລາຍລະອຽດເພີ່ມເຕີມຂໍໃຫ້ເຂົ້າເບິ່ງ changinglanes.employment.gov.au

## ສູນຊອກຫາງານແລະຝຶກຄວາມຊໍານານ

- Dandenong (03) 8774 4298
- Chadstone (03) 9564 2755
- Broadmeadows (03) 9041 3893
- Sunshine (03) 9919 9988

ຖ້າຕ້ອງການລາຍລະອຽດເພີ່ມເຕີມ:

ອີເມລ: **auto.industry@edumail.vic.gov.au**

ເບິ່ງ: **http://www.education.vic.gov.au/auto**

## ພະນັກງານຈະໄດ້ຮັບການອຸ້ມຊູຫຍັງແດ່ໃນການຊອກຫາວຽກໃໝ່?

ມີນາຍຈ້າງຈໍານວນຫຼວງຫຼາຍທີ່ຈະປະສານງານກັບລັດຖະບານ, Holden, Toyota, Ford ແລະ ທຸລະກິດເຄືອຂ່າຍທີ່ຢູ່ໃນສາຍ ທີ່ຈະລະບຸໂອກາດດ້ານວຽກງານແລະຊ່ວຍເອົາພະນັກງານເຂົ້າເຮັດວຽກໃໝ່. ນອກຈາກໂຄງການອຸ້ມຊູທີ່ກ່າວມາຂ້າງເທິງແລ້ວ, ລັດຖະບານອອສເຕຣເລັຍຍັງຈະສືບຕໍ່ໃຫ້ຄວາມ ຊ່ວຍເຫຼືອແກ່ Holden, Toyota, Ford ແລະ ພະນັກງານເຮັດວຽກເປັນສາຍທີ່ມີສິດ ໂດຍຜ່ານ ໂຄງການປັບປຸງໂຄງຮ່າງອຸສາຫະກໍາລົດຍົນ. ໂຄງການດັ່ງກ່າວໃຫ້ຄວາມຊ່ວຍເຫຼືອດັ່ງຂ້າງລຸ່ມນີ້:

- ຂຽນໃບປະຫວັດ
- ກະກຽມຂຽນໃບສະໝັກງານ
- ຄວາມຊໍານານໃນການສໍາພາດເຮັດວຽກ
- ສອບເອົາບັດແລະໃບອະນຸຍາດ

ຖ້າທ່ານຕ້ອງການລາຍລະອຽດເພີ່ມເຕີມຂໍໃຫ້ເບິ່ງ: www.whatsnext.employment.gov.au/aisap

## ກ່ຽວກັບກອງທຶນພັດທະນາ Growth Fund

ໂຄງການລິເລີ່ມຄວາມຊໍານານແລະຝຶກອາຊີບ ແມ່ນຈຸດສູນກາງຂອງກອງທຶນພັດທະນາຂອງລັດຖະບານອອສເຕຣເລັຍ, ເຊິ່ງໃຫ້ການອຸ້ມຊູພະນັກງານ, ບັນດາທຸລະກິດແລະບັນດາເຂດທີ່ຖືກກະທົບຈາກການປ່ຽນແປງຂອງອຸສາຫະກໍາຜະລິດລົດຍົນ. ກອງທຶນ Growth Fund ໄດ້ຖືກຕັ້ງຂຶ້ນໂດຍລັດຖະບານອອສເຕຣເລັຍແລະການປະກອບສ່ວນຈາກລັດຖະບານ South Australia ແລະ Victoria, Holden and Toyota.

ຕ້ອງການລາຍລະອຽດເພີ່ມເຕີມຂໍໃຫ້ເບິ່ງ: www.business.gov.au/GrowthFund